# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 03 ພຶສພາ 2020 (05-03-2020)

---

## ກຳລັງໃຈ. (Encourage)

| |
|---|
| *ເມື່ອໃດທີ່ທ່ານເຄີຍໄດ້ສວນທາງກັບຜູ້ໃຫ້ກຳລັງໃຈໂດຍທຳມະຊາດ?* |

**ຈຸດສຳຄັນໃນບົດຮຽນ**: ການໃຫ້ກຳລັງໃຈເພີ່ມພູນຄວາມສັມພັນໃຫ້ເຂັ້ມແຂງຂຶ້ນ.

**ພຣະຄັມພີຕອບສນອງຕໍ່ຊີວິດ:** ພວກເຮົາໄດ້ຮັບການອອຍໃຈໃຫ້ກິນຢາວິຕາມິນມາຕລອດຊີວິດ ພວກເຮົາກໍປະຕິບັດມາ. ຕັ້ງແຕ່ປີ 1940, ພວກເຮົາກໍປ່ອນພວກມັນໃສ່ປາກຂອງເຮົາແຕ່ລະວັນ. ພວກເຮົາຮູ້ດີວ່າພວກເຮົາຕ້ອງການວິຕາມິນ ແລະ ແຮ່ທາດສຳຄັນເຫຼົ່ານີ້, ແລະເຖິງແມ່ນວ່າອາຫານດີຈະໃຫ້ທຸກສິ່ງທີ່ເຮົາຕ້ອງການກໍຕາມ, ພວກເຮົາເຄິ່ງນຶ່ງກໍຍັງຊື້ວິຕາມິນລວມ ຫຼືອາຫານເສີມເພີ່ມຢູ່.

ຈຳນວນປະລິມານຢາແຕ່ລະວັນກໍດີແລ້ວສຳລັບເຮົາ. ພວກເຮົາສາມາດໃຊ້ "ຈຳນວນປະລິມານຢາແຕ່ລະວັນ" ສຳລັບຢ່າງອື່ນກໍໄດ້ເໝືອນກັນ. ໃຫ້ເຮົາເອີ້ນວ່າ ວິຕາມິນຝ່າຍ "ວິນຍານ ແລະ ອາຣົມ": ວິຕາມິນກຳລັງໃຈ. ພວກເຮົາໄດ້ຖືກສ້າງມາເພື່ອດຳລົງຊີວິດໃນຄວາມສັມພັນກັບຄົນອື່ນ, ແລະ ພວກເຮົາຫິວກະຫາຍການຢືນຢັນຈາກຄົນອື່ນ. ພວກເຮົາຕ້ອງການ ການໃຫ້ກຳລັງໃຈຈາກຄົນອື່ນ ເພື່ອໃຫ້ເຕີບໃຫຍ່ຂຶ້ນ ດັ່ງທີ່ພຣະເຈົ້າຕັ້ງໃຈເອົາໄວ້.

ຈົ່ງຖາມນັກກິລາຄົນໃດຄົນນຶ່ງທີ່ເຂົາໄດ້ປຸງບ ເມື່ອໄດ້ໂອກາດ ຫຼິ້ນຢູ່ເດີ່ນປະຈຳບ້ານຂອງເຂົາເອງເຂົາຮູ້ສຶກຈັ່ງໃດ? ກຳລັງໃຈຊ່ອຍຫຼາຍແມ່ນບໍ່. ໜ້າເສັຽດາຍ, ພວກເຮົາຫຼາຍຄົນຂາດແຄນການໃຫ້ກຳລັງໃຈເຫຼົ່ານີ້.

**ພຣະຄັມພີກ່າວວ່າແນວໃດ** : ( ເບິ່ງຕາມຂໍ້ 1, 2 ແລະ 3 )

### ການສຶກສາພຣະຄັມພີ

### 1. <u>ກິຈການ 9:26-28</u>.

*" [26]ເມື່ອໂຊໂລມາຮອດກຸງເຢຣູຊາເລັມແລ້ວ ກໍພຍາຍາມຈະເຂົ້າສນິດສນົມກັບພວກລູກສິດ ແຕ່ ພວກເຫຼົ່ານັ້ນຍັງຢ້ານເພິ່ນຢູ່ ເພາະບໍ່ເຊື່ອວ່າເພິ່ນເປັນລູກສິດ. [27]ແຕ່ບາຣະນາບາໄດ້ພາເພິ່ນໄປຫາພວກອັຄສາວົກ ແລະ ເລົ່າເຣື່ອງໃຫ້ເຂົາຟັງວ່າ ໂຊໂລໄດ້ເຫັນອົງພຣະຜູ້ເປັນເຈົ້າໃນກາງທາງນັ້ນຢ່າງໃດ, ແລະ ພຣະອົງໄດ້ຊົງກ່າວກັບທ່ານ, ແລະທ່ານໄດ້ປະກາດອອກພຣະນາມພຣະເຢຊູ ໃນເມືອງດາມາເຊດ້ວຍໃຈກ້າ. [28]ໂຊໂລໄດ້ເຂົ້ານອກອອກໃນຢູ່ກັບເຂົາໃນກຸງເຢຣູຊາເລັມ ປະກາດອອກພຣະນາມຂອງອົງພຣະຜູ້ເປັນເຈົ້າດ້ວຍໃຈກ້າຫານ."*

ສ່ວນຫຼາຍ, ວິທີຮຽນທີ່ງ່າຍທີ່ສຸດແມ່ນການເບິ່ງຄົນໃດຄົນນຶ່ງ. ດັ່ງທີ່ພາສິດບູຮານກ່າວວ່າ: ເຮົາໄດ້ຮັບຫຼາຍກວ່າສິ່ງທີ່ສອນ. ບາຣະນາບາແມ່ນຄົນນຶ່ງຄວນຄ່າແກ່ການເບິ່ງເອົາເປັນຕົວຢ່າງ. ພວກເຮົາໃຫ້ເພິ່ນຮັບໃຊ້ ເປັນໂຄສ໌ ຊູກຳລັງໃຈພວກເຮົາ. ເພິ່ນໄດ້ສະແດງໃຫ້ເຫັນແບບຢ່າງສາມທາງທີ່ພວກເຮົາສາມາດນຳໄປຊູໃຈຜູ້ອື່ນ.

ອັນທີ່ນຶ່ງ, ພວກເຮົາສາມາດໃຫ້ກຳລັງໃຈໃນການຍອມຮັບ. ຊື່ບາຣະນາບາໄດ້ພົບຄັ້ງທຳອິດໃນພຣະຄັມພີວ່າແມ່ນໂຍເຊັບໄທເກາະກຸບໂຣ(ກິຈການ 4:26). ພວກອັຄສາວົກໄດ້ໃສ່ຊື່ຫຼິ້ນເພິ່ນວ່າ "ບາຣະນາບາ," ຊຶ່ງມີຄວາມໝາຍວ່າ "ລູກແຫ່ງການໜູນນ້ຳໃຈ." ເປັນທີ່ປະຈັກແຈ້ງແລ້ວວ່າ ທ່ານຜູ້ນີ້ໄດ້ສ້າງກົນໄກໃນການເສີມສ້າງຜູ້ອື່ນດ້ວຍຖ້ອຍຄຳຄວາມຮັກ, ການສະແດງນ້ຳໃຈເອື້ອເຟື້ອເພື່ອແຜ່, ແລະການເປັນແບບຢ່າງອັນດີ. ຍາມໃດຄົນໃນຄຣິສຕະຈັກຍຸກແລກຄິດເຖິງການໜູນນ້ຳໃຈ ເຂົາກໍຈະນຶກເຖິງບາຣະນາບາທັນທີ, ແລະ ຊື່ຫຼິ້ນນີ້ກໍຈະສະກົດໃນໃຈເຂົາ.

ໃນກິຈການ ບົດ9, ພຣະເຈົ້າໄດ້ໃຊ້ບາຣະນາບາ ພາທ່ານໂຊໂລມາບ່ອນທີ່ໂດດເດັ່ນ. ພວກອັຄສາວົກອາດບໍ່ປະຕິເສດຄຸນສົມບັດຂອງໂຊໂລທັງໝົດ, ແຕ່ແນ່ນອນ ເຂົາໄດ້ຢູ່ຫ່າງໆ. ອີງຕາມປະວັດຜ່ານມາ, ທ່ານໂຊໂລບໍ່ແມ່ນຄົນປະເພດທີ່ຄຣິສຕຽນຈະຢາກເຂົ້າໃກ້. ເຂົາຊາບກັນດີແລ້ວວ່າຖ້າເຂົ້າໃກ້ ຕ້ອງມີເຣື່ອງ-ຫຼືບໍ່ກໍຕາຍ! ເຖິງແມ່ນວ່າ ຫົວໃຈຂອງທ່ານໂຊໂລໄດ້ຮັບການປ່ຽນໃໝ່ຈົນໝົດສິ້ນ ຫຼັງຈາກທີ່ເພິ່ນໄດ້ພົບພຣະເຢຊູແລ້ວກໍຕາມ, ຜູ້ເຊື່ອໃນກຸງເຢຣູຊາເລັມຍັງບໍ່ຄ່ອຍຈະເຊື່ອໃຈເພິ່ນ.

| |
|---|
| *ມີຄວາມສ່ຽງຫຍັງແດ່ເມື່ອທ່ານຮັບຮອງຄົນນອກ ?* |

ເຖິງຢ່າງໃດ ບາຣະນາບາກໍນຶກສເມີວ່າໂຊໂລໄດ້ຮັບການປ່ຽນໃໝ່ ໂດຍການຊໍາລະລ້າງດ້ວຍພຣະໂລຫິດຂອງພຣະຄຣິດ. ສະນັ້ນ ບາຣະນາບາ ຈຶ່ງຊູຄໍຂຶ້ນ ຄໍ້າປະກັນທ່ານໂຊໂລ. ເພິ່ນຊູໃຈບັນດາອັຄສາວົກໃຫ້ທົບທວນຄວາມສົງສັຍຂອງພວກເຂົາ ແລະສ່ຽງຮັບຄົນຜູ້ນີ້. ພວກອັຄສາວົກອາດບໍ່ທັນເຊື່ອໃຈທ່ານໂຊໂລເທື່ອ, ແຕ່ພວກເຂົາໄດ້ເຊື່ອບາຣະນາບາ; ດັ່ງນັ້ນພວກເຂົາຈຶ່ງເປີດປະຕູ ແລະເປີດໃຈພວກເຂົາໃຫ້ທ່ານໂຊໂລ, ແລະເພິ່ນຈຶ່ງກາຍມາເປັນກໍາລັງສໍາຄັນຂອງການແຜ່ຂຍາຍຂ່າວປະເສີດຢ່າງຍິ່ງ.

ລອງວາດພາບເບິ່ງວ່າຄວາມເຊື່ອຂອງທ່ານຈະມີຄວາມແຕກຕ່າງຢ່າງໃດຫາກທ່ານໂປໂລຖືກປະຕິເສດຈາກພວກອັຄສາວົກ! ທ່ານບາຣະນາບາເດີນຕາມທາງທີ່ບໍ່ລາບລຽບ ເຕັມໄປດ້ວຍຄວາມຢ້ານກົວ ແລະ ຖ້າເຂົາປະຕິເສດການຮັບຮອງທ່ານໂຊໂລ, ຂໍ້ຄວາມຫຼາຍໆພາກໃນພຣະຄັມພີໃໝ່ກໍຈະບໍ່ປາກົດ. ຖ້າປາສຈາກທ່ານໂປໂລແລ້ວ, ເຄິ່ງທີສອງຂອງພຣະທັມກິຈການ ກໍຄົງຈະຈົມຫາຍລົງໄປໃນທະເລແລ້ວ. ໂດຍຜ່ານຊາຍຜູ້ນີ້, ຄວາມກະຕືລືລົ້ນຂອງສາສນາທູດໂບດຕ່າງໆກໍໄດ້ເລີ່ມພຸ່ງຂຶ້ນ. ໂດຍທາງການຮັບໃຊ້ຂອງຄົນຜູ້ນີ້, ຂ່າວປະເສີດຂອງພຣະຄຣິດຈຶ່ງໄດ້ແຜ່ໄປສູ່ປວງຊົນທີ່ສີວິໄລໃນພາກຕາເວັນຕົກ.

ທ່ານຄິດວ່າທ່ານບາຣະນາບາມີທີທ່າຈັກໜ້ອຍບໍ່ວ່າ ອິດທິຣິດທ່ານໂປໂລຈະກາຍມາເປັນພັນທະກິດອັນຍິ່ງໃຫຍ່? ມັນເປັນໄປໄດ້, ແຕ່ມັນເໝືອນກັບວ່າຈະເປັນໄປບໍ່ໄດ້. ຄືວ່າທ່ານບາຣະນາບາພຽງແຕ່ເຮັດໃນສິ່ງທີ່ເຄີຍເຮັດເທົ່ານັ້ນເຊັ່ນ: ການຊ່ວຍເພື່ອນຜູ້ເຊື່ອໃຫ້ເລີ່ມບາດກ້າວ ໃນການເຕີບໃຫຍ່ຝ່າຍວິນຍານຂອງລາວ. ຖ້າບໍ່ມີທ່ານບາຣະນາບາ ທ່ານໂປໂລກໍອາດເປັນພຽງໜໍ່ແໜງນ້ອຍໆໜໍ່ນຶ່ງຂອງພາລະກິດທີ່ເບັ່ງບານຂອງຄຣິສຕະຈັກເທົ່ານັ້ນ. ແຕ່ພຣະເຈົ້າໄດ້ໃຊ້ຜູ້ໃຫ້ກໍາລັງໃຈ ເພື່ອຊ່ວຍໃຫ້ດອກໄມ້ຂອງທ່ານໂປໂລເບັ່ງບານຂຶ້ນສູ່ຄວາມຍິ່ງໃຫຍ່.

ມີຜູ້ໃດໃນຊີວິດຂອງທ່ານຂາດແຄນການໃຫ້ກໍາລັງໃຈບໍ່? ທ່ານລອງແນມໄປຮອບຂ້າງທ່ານເບິ່ງ ມີໃຜຜູ້ນຶ່ງບໍ່ ທີ່ທ່ານຈະສາມາດເຊື້ອເຊີນໃຫ້ເຂົ້າມາໃນແວດວົງຂອງທ່ານໄດ້? ທ່ານບໍ່ອາດຮູ້ເຖິງຄວາມແຕກຕ່າງທີ່ຈະເກີດຂຶ້ນກັບຊີວິດຂອງຄົນອື່ນ ເມື່ອທ່ານເດ່ມືມິຕພາບໃຫ້ ແລະເຊື້ອເຊີນລາວເຂົ້າມາໃນໂລກຂອງທ່ານ.

## 2. <u>ກິຈການ 11:21-24</u>.

*“[21]ຣິດອໍານາດຂອງອົງພຣະຜູ້ເປັນເຈົ້າກໍສະຖິດຢູ່ກັບເຂົາ ຄົນເປັນຈໍານວນຫຼາຍທີ່ເຊື່ອ ກໍໄດ້ກັບໃຈຕ່ອຄືນມາຫາອົງພຣະຜູ້ເປັນເຈົ້າ. [22]ຂ່າວນັ້ນກໍໄດ້ເລົ່າລືໄປເຖິງທູຄຣິສຕະຈັກໃນກຸງເຢຣູຊາເລັມ ເຂົາຈຶ່ງໃຊ້ ບາຣະນາບາໄປຍັງເມືອງອັນຕີໂອເຊັຽ. [23]ເມື່ອທ່ານມາເຖິງແລ້ວກໍໄດ້ເຫັນພຣະຄຸນທີ່ພຣະເຈົ້າຊົງໂຜດກໍປິຕິຍິນດີຈຶ່ງໄດ້ຕັກເຕືອນຄົນເຫຼົ່ານັ້ນໃຫ້ຕັ້ງໃຈໝັ້ນຄົງ ຕິດສນິດຢູ່ກັບອົງພຣະຜູ້ເປັນເຈົ້າ. [24]ເພາະທ່ານຜູ້ນີ້ເປັນຄົນດີ ເຕັມໄປດ້ວຍພຣະວິນຍານບໍຣິສຸດ ແລະ ຄວາມເຊື່ອ ແລະ ມີຄົນຈໍານວນຫຼາຍສົມຄວນ ໄດ້ເພີ່ມເຕີມເຂົ້າມາຢູ່ຝ່າຍອົງພຣະຜູ້ເປັນເຈົ້າ.”*

ພວກເຮົາສາມາດໃຫ້ກໍາລັງໃຈດ້ານການເຕີບໃຫຍ່ເຊັ່ນດຽວກັນ. ທ່ານບາຣະນາບາກໍໄດ້ໜູນໃຈຜູ້ເຊື່ອໃຫ້ຍອມຮັບຜູ້ເຊື່ອອື່ນເຊັ່ນດຽວກັນ, ແລະເພິ່ນໄດ້ໜູນໃຈໃຫ້ຜູ້ເຊື່ອເຕີບໃຫຍ່ຝ່າຍວິນຍານອີກດ້ວຍ. ໃນກິຈການບົດ11, ທ່ານບາ

ຣະນາບາໄດ້ກັບຄືນສູ່ທັມມາດ. ເທື່ອນີ້, ເພິ່ນໄດ້ຮັບການມອບໝາຍຈາກພວກອັຄສາວົກໃນເຢຣູຊາເລັມໃຫ້ເດີນທາງ 300ໄມລ໌ ຈາກທິດເໜືອຫາອັນຕີໂອເຊັຽ. ຄຣິສຕຽນຈຳນວນຫຼວງຫຼາຍໃນອັນຕີໂອເຊັຽໄດ້ໂອບກອດເອົາຖານະຄຣິສ ຕຽນ, ແລະຜູ້ເຊື່ອກໍໄດ້ເລີ່ມເຜີຍແຜ່ຂ່າວປະເສີດສູ່ຄົນຕ່າງຊາດເໝືອນກັນ. ຜົນຕາມມາກໍຄືຊາວກຣີກໃນຂົງເຂດນັ້ນ ໄດ້ເຊື່ອໃນອົງພຣະຄຣິດ. ເມື່ອພວກອັຄສາວົກໄດ້ຮັບລົມຫາຍໃຈຈາກການເກັບກ່ຽວຢ່າງເຫຼືອເຊື່ອ, ພວກເຂົາໄດ້ສົ່ງ ບາຣະນາບາໄປປະເມີນສະຖານະການ ແລະລາຍງານສິ່ງທີ່ອົງພຣະຜູ້ເປັນເຈົ້າໄດ້ກະທຳນັ້ນ.

ຈົ່ງກວດກາເບິ່ງພາບອັນສວຍງາມທີ່ທ່ານລູກາ, ຜູ້ຂຽນພຣະທັມກິຈການ, ໄດ້ວາດພາບການຮັບໃຊ້ຂອງບາຣະ ນາບາ. ຍ້ອນການຂົ່ມເຫັງ, ຜູ້ເຊື່ອໄດ້ແຕກກະແຈກກະຈາຍໄປ, ດັ່ງນັ້ນ ອານາຈັກຂອງພຣະເຈົ້າຈຶ່ງຈະເຣີນກ້າວ ໜ້າຂຶ້ນໃນທຸກບ່ອນທີ່ເຂົາໄປ. ທັນທີທີ່ບາຣະນາບາໄດ້ເຫັນສິ່ງທີ່ພຣະເຈົ້າໄດ້ກະທຳ, “ເພິ່ນກໍປິຕິຍິນດີຈຶ່ງໄດ້ຕັກ ເຕືອນຄົນເຫຼົ່ານັ້ນໃຫ້ຕັ້ງໃຈໝັ້ນຄົງຕິດສນິດຢູ່ກັບອົງພຣະຜູ້ເປັນເຈົ້າ”(ຂໍ້23). ແນ່ນອນ ບາຣະນາບາໄດ້ອູ້ມຊູຜູ້ເຊື່ອ ເຫຼົ່ານີ້ຢ່າງມະຫາສານ ຍ້ອນເພິ່ນໄດ້ຮັບແຮງໃຈຢ່າງເຕັມປ່ຽມກັບມາບ້ານ. ການເປັນຄຣິສຕຽນແມ່ນການຍອມຮັບ ທາງແຫ່ງຄວາມຍາກລຳບາກ, ແຕ່ ເປັນການເດີນທາງທີ່ພວກເຂົາສາມາດເຮັດໄດ້ດ້ວຍຄວາມຍິນດີ.

ບາຣະນາບາໄດ້ສະແດງຄວາມຍິນດີໃນຄວາມເຊື່ອຂອງເພິ່ນອອກດ້ວຍການເຮັດຫຼາຍກວ່າພຽງຄຳເວົ້າຄື: ຄຳເວົ້າ ແລະການກະທຳຄວບຄູ່ກັນໄປ: *“ເພາະທ່ານຜູ້ນີ້ເປັນຄົນດີ ເຕັມໄປດ້ວຍພຣະວິນຍານບໍຣິສຸດແລະຄວາມເຊື່ອ ແລະ ມີຄົນຈຳນວນຫຼາຍສົມຄວນ ໄດ້ເພີ່ມເຕີມເຂົ້າມາຢູ່ຝ່າຍອົງພຣະຜູ້ເປັນເຈົ້າ” (ຂໍ້24).*

ບາງເທື່ອທ່ານກໍຕົກຢູ່ໃນລະດູທີ່ຂາດແຄນຄຳເວົ້າດີໆຈາກໝູ່ເພື່ອນດັ່ງບາຣະນາບາ. ທ່ານມີໃຜບໍ່ເປົ່າສາຍລົມ ເຢັນພັດໃສ່ເຮືອໃບຂອງທ່ານ, ແລະຫຼິງເຫັນຄວາມເປັນໄປໄດ້ ແລ້ວພັກດັນໃຫ້ທ່ານເຕີບໃຫຍ່? ຖ້າບໍ່ມີ, ຈົ່ງເລີ່ມອະ ທິຖານຂໍໃຫ້ພຣະເຈົ້າສົ່ງຄົນນັ້ນເຂົ້າມາໃນຊີວິດທ່ານ. ການໂຕ້ຖຽງ, ຈົ່ງໃຫ້ເປັນຄົນດັ່ງກ່າວນີ້ໃນຊີວິດຂອງຄົນອື່ນ. ມີໃຜບໍ່ໃນຊີວິດທ່ານ ເບິ່ງຄືວ່າກຳລັງຈົມລົງ? ທ່ານຫຼຽວເຫັນບຸກຄົນທີ່ກຳລັງຫ່ຽວແຫ້ງລົງບໍ່? ຈົ່ງເປັນເໝືອນບາຣະ ນາບາ ແລະເລີ້ມແຜນງານໃນການເສີມສ້າງຄົນໃດຄົນນຶ່ງ. ທ່ານທັງສອງຈະໄດ້ຮັບພຣະພອນຮ່ວມກັນ.

| |
|---|
| ***ພວກເຮົາສາມາດເຕີບໃຫຍ່ຢ່າງຕັ້ງໃຈຢ່າງໃດໃນການເຂົ້າໃນບົດບາດເປັນຜູ້ໃຫ້ກຳລັງໃຈ?*** |

## 3. ກິຈການ 11:25-26.

*25ຝ່າຍບາຣະນາບາ ຈຶ່ງໄປເມືອງຕາໂຊ ເພື່ອຊອກຫາໂຊໂລ. 26ເມື່ອພົບແລ້ວກໍພາມາຍັງເມືອງອັນຕີໂອເຊັຽ ທ່ານ ທັງສອງໄດ້ເຕົ້າປະຊຸມກັນກັບ ຄຣິສຕະຈັກຕລອດປີນຶ່ງ ຈຶ່ງໄດ້ສັ່ງສອນຫຼາຍຄົນສົມຄວນ ໃນເມືອງອັນຕີໂອເຊັຽນີ້ ພວກລູກສິດໄດ້ຖືກເອີ້ນວ່າ ຄຣິສຕຽນເປັນເທື່ອທຳອິດ.*

ແລະພວກເຮົາກໍສາມາດຊູໃຈການຮັບໃຊ້ດ້ວຍຄຳເວົ້າໜູນໃຈ ເຊັ່ນ:

- “ວາວ, ທ່ານມີພອນສວັນກັບເດັກນ້ອຍແທ້ຈິງ.”
- “ທ່ານເຮັດໃຫ້ຂ້ອຍດີໃຈຕລອດອາທິດ ຍ້ອນເພງມ່ວນໆຂອງເຈົ້າ.”
- “ທ່ານເຄີຍຄິດວ່າຈະເປັນຜູ້ນຳກຸ່ມນ້ອຍໆຂອງເຈົ້າເອງບໍ່? ເມື່ອເຈົ້າເວົ້າ, ຄົນຟັງດີ.”

ເຄີຍມີຄົນເວົ້າແບບນີ້ກັບທ່ານບໍ່? ຂໍ້ຄວາມນ້ອຍໆແບບນີ້ເບິ່ງຄືວ່າບໍ່ຫຼວງບໍ່ຫຼາຍ, ແຕ່ ພາຍລຸນມາ, ຕົ້ນໄມ້ເຕີບໃຫຍ່ ສູງຂຶ້ນໂດຍການທົດນ້ຳຕາມທັມດາສັນໃດ ຜູ້ເຊື່ອກໍເຕີບໃຫຍ່ຂຶ້ນ ໂດຍການໃຫ້ກຳລັງໃຈຕາມທັມດາສັນນັ້ນ. ຄຣິສ ຕະຈັກຂອງພຣະເຢຊູຄຣິດຄວນເປັນບ່ອນ<u>ໃຫ້ກຳລັງໃຈຫຼາຍທີ່ສຸດໃນໂລກ</u>. ບ້ານທີ່ມອບໃຈແດ່ພຣະຄຣິດຄວນເປັນ ບ້ານຂຽວສົດ ທີ່ມີເດັກໜຸ່ມນ້ອຍຈະເຣີນເຕີບໃຫຍ່ຂຶ້ນ ໃນບ້ານນັ້ນ. ຄຳເວົ້າດີເຊີດຊູໃຫ້ຈະເຣີນເຕີບໂຕ. ແລະຄວນ ເປັນຄຳເວົ້າໃຫ້ກຳລັງໃຈຄົນອື່ນ ລຸກຂຶ້ນ ແລະ ຮັບໃຊ້.

*ແມ່ນຫຍັງຄືບາງຢ່າງທີ່ອາດຈະກີດຂວາງຄົນທີ່ຢາກໃຊ້ຂອງປະທານຝ່າຍວິນຍານໃນຄຣິສຕະຈັກ?*

ພວກເຮົາບໍ່ຮູ້ວ່າບາຣະນາບາເວົ້າຫຍັງກັບທ່ານໂຊໂລ, ແຕ່ ເມື່ອຄຣິສຕະຈັກອັນຕີໂອເຊັຽເລີ່ມບານ, ບາຣະນາບາກໍໄດ້ໄປຮັບເອົາໂຊໂລມາຈາກຕາໂຊ. ເພິ່ນໄດ້ພາໂຊໂລມາອັນຕີໂອເຊັຽເພື່ອຮັບໃຊ້, ແລະ ໃຊ້ຂອງປະທານທີ່ພຣະເຈົ້າໃຊ້ໃຫ້ເພິ່ນເຮັດ.

ມີເທື່ອນຶ່ງ, ບາຣະນາບາໄດ້ທຳຕົນເປັນພີ່ລ້ຽງທ່ານໂຊໂລ, "ຫົດນ້ຳ" ເພິ່ນດ້ວຍການໃຫ້ກຳລັງໃຈ ແລະ ຊົມເພິ່ນເຕີບໃຫຍ່ໃນຄວາມເຊື່ອ. ດຽວນີ້ທ່ານໂຊໂລໄດ້ຈະເຣີນຂຶ້ນເຖິງຈຸດ ເປັນເພື່ອນຄຽງບ່າຄຽງໄຫຼ່ກັບບາຣະນາບາໃນການຮັບໃຊ້, ດັ່ງນັ້ນທັງສອງໄດ້ກາຍເປັນກຳລັງແຮງ ຮ່ວມທຸກຮ່ວມສຸກໃນການສ້າງສາວົກ. ການຟື້ນຟູໄດ້ເປັນຫຼັກຖານເມື່ອ ໂຊໂລ ແລະ ບາຣະນາບາ ຍົກຊູຖ້ອຍຄຳທີ່ໃຫ້ຊີວິດຂຶ້ນ. ທ່ານໂຊໂລຮັບໃຊ້ຍ້ອນເພິ່ນເຮັດຕາມການຮຽກເອີ້ນຂອງພຣະເຈົ້າ ແລະ ບາຣະນາບາໃຫ້ກຳລັງໃຈໃນວຽກງານຂອງເພິ່ນ.

ແຕ່ ບາຣະນາບາບໍ່ພຽງແຕ່ໃຊ້ຄຳເວົ້າຢ່າງດຽວໃນການໃຫ້ກຳລັງໃຈການຮັບໃຊ້ແລະການສອນທ່ານໂຊໂລ. ເພິ່ນໄດ້ໃຫ້ກຳລັງໃຈໂດຍການກະທຳນຳ; ເພິ່ນຮັບໃຊ້ຄຽງຂ້າງກັບທ່ານໂຊໂລ. ບາຣະນາບາ ດຳຣົງຊີວິດຕາມພຣະທັມເຮັບເຣີ 10:24 *"ຈົ່ງຄ່ອຍພິຈາຣະນາເບິ່ງເຊິ່ງກັນແລະກັນ ເພື່ອປຸກໃຈຊຶ່ງກັນແລະກັນ ໃຫ້ມີຄວາມຮັກ ແລະ ເຮັດການດີງາມ."* ຈົ່ງມີກຳລັງໃຈເຮັດຕາມແບບຢ່າງຂອງເພິ່ນ.

*ມີທາງໃດແດ່ທີ່ເຮົາຈະສາມາດໃຫ້ກຳລັງໃຈຄົນອື່ນຮັບໃຊ້ໃນໂບດຂອງເຮົາ?*

## ນຳໃຊ້ໃນຊີວິດ

ທ່ານສາມາດເຮັດໃຫ້ຄວາມສັມພັນຂອງທ່ານເຂັ້ມແຂງຂຶ້ນໂດຍການໃຫ້ກຳລັງໃຈຢ່າງໃດ? ຈົ່ງເລືອກເອົາການນຳໃຊ້ຂໍ້ນຶ່ງຕໍ່ໄປນີ້:

- **ຈົ່ງສະແດງຄວາມຂອບໃຈ.** ຈົ່ງສະແດງຄວາມຂອບໃຈຜູ້ທີ່ເປັນກຳລັງໃຈແກ່ທ່ານ. ຈົ່ງເຈາະຈົງຄຳເວົ້າຫຼືການກະທຳຂອງເພິ່ນວ່າໄດ້ຊ່ອຍທ່ານຢ່າງໃດ.
- **ຈົ່ງສຳຫຼວດຊີວິດທ່ານ.** ຈົ່ງພິຈາຣະນາເບິ່ງວ່າຄົນໄດ້ຮັບກຳລັງໃຈຈາກແບບຢ່າງຫຼືການກະທຳຂອງທ່ານຫຼືບໍ່. ພິຈາຣະນາເບິ່ງວ່າມີສິ່ງໃດທ່ານຄວນປັ່ງນ ເພື່ອເປັນຜູ້ໜູນນ້ຳໃຈຄືກັນກັບ ບາຣະນາບາ.
- **ຈົ່ງໃຫ້ກຳລັງໃຈຊຶ່ງກັນແລະກັນ.** ຈົ່ງເລົ່າວິຖີການດຳຣົງຊີວິດຂອງແຕ່ລະຄົນໃນກຸ່ມ ນຶ່ງຫຼືສອງບຸກຄລິກໃນໝາກຜົນຝ່າຍວິນຍານ (ຄາລາເຕັຽ 5:22-23).

ພວກເຮົາອາດບໍ່ໄດ້ຮັບການຮຽກເອີ້ນໃຫ້ຮັບໃຊ້ໃນທຳນອງດຽວກັນກັບທ່ານໂປໂລແລະບາຣະນາບາໄດ້ຮັບ ຫຼືມີຜົນຕໍ່ອານາຈັກຂອງພຣະເຈົ້າໃນອັດຕຣາດຽວກັນ. ແຕ່ພວກເຮົາຄວນຈະເປັນຜູ້ໃຫ້ກຳລັງໃຈທຸກຄົນ. ແລະ ໃຜຊິຮູ້? ບາງທີຄົນທີ່ເຮົາໃຫ້ກຳລັງໃຈນັ້ນອາດເກີດຜົນຫຼາຍກວ່າທີ່ເຮົາຄິດກໍເປັນໄດ້.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**